ປະທານປະເທດ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນະຄອນຫຼວງວຽງຈັນ, ວັນທີ 10 ຕຸລາ 2023

ພະນະທ່ານ,

ຂ້າພະເຈົ້າ ມີຄວາມເສົ້າສະຫຼົດໃຈຢ່າງສຸດຊຶ້ງ ເມື່ອໄດ້ຊາບຂ່າວວ່າ ພະນະທ່ານ ລາຊໂລ ໂຊລໂຢມ, ອະດີດ ປະທານາທິບໍດີ ແຫ່ງ ຮົງກາຣີ, ຜູ້ນຳທີ່ແສນເຄົາລົບຮັກ ຂອງ ປະຊາຊົນ ຮົງກາຣີ ໄດ້ເສຍຊີວິດ ໃນວັນທີ 08 ຕຸລາ 2023.

ພະນະທ່ານ ລາຊໂລ ໂຊລໂຢມ ໄດ້ອຸທິດຕົນເຂົ້າໃນການສ້າງສາພັດທະນາປະເທດ ຮົງກາລີ ໃນຕະຫຼອດໄລຍະຫຼາຍປີທີ່ຜ່ານມາ. ການຈາກໄປຂອງ ພະນະທ່ານ ຖືເປັນການສູນເສຍອັນໃຫຍ່ຫຼວງ ສຳລັບຄອບຄົວຂອງເພິ່ນ ຕະຫຼອດເຖິງ ປະຊາຊົນ ຮົງກາຣີ ທຸກຖ້ວນໜ້າ.

ຕາງໜ້າໃຫ້ ປະຊາຊົນລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສະແດງຄວາມເສົ້າສະຫຼົດໃຈເປັນຢ່າງຍິ່ງ ແລະ ຂໍແບ່ງເບົາຄວາມທຸກໂສກ ມາຍັງ ພະນະທ່ານ ແລະ ຜ່ານພະນະທ່ານ ໄປຍັງ ຄອບຄົວ ຂອງທ່ານ ໂຊລໂຢມ ລວມທັງ ປະຊາຊົນ ຮົງກາຣີ ເພື່ອນມິດ ມານະໂອກາດນີ້ດ້ວຍ.

ຂໍໃຫ້ດວງວິນຍານ ຂອງ ພະນະທ່ານ ລາຊໂລ ໂຊລໂຢມ ຈົ່ງໄປສູ່ສຸຂະຕິ.

ທອງລຸນ ສີສຸລິດ

ພະນະທ່ານ ກາຕາລິນ ໂນວັກ
ປະທານາທິບໍດີ ແຫ່ງ ຮົງກາຣີ
ທີ່ ບູດາແປັສ